ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------- ☆ --------

ສຳນັກງານນາຍົກລັດຖະມົນຕີ

ເລກທີ : 118 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 11.07.2008

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ສະບັບເລກທີ 123/ນຍ, ລົງວັນທີ 14 ເມສາ 2007;
- ອີງຕາມ ຖະແຫຼງການ ວ່າດ້ວຍການຮັບເອົາ ສປປ ລາວ ເຂົ້າເປັນສະມາຊິກ ຂອງ ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ທີ່ ສປປ ລາວ ໄດ້ລົງນາມໃນວັນທີ 23 ກໍລະກົດ 1997;
- ອີງຕາມ ຄວາມຮຽກຮ້ອງຕ້ອງການ ຂອງ ສປປ ລາວ ໃນການເປີດກວ້າງການພົວພັນ, ຮ່ວມມືກັບສາກົນ ແລະ ຕ່າງປະເທດຢ່າງຮອບດ້ານ ໂດຍສະເພາະແມ່ນດ້ານເສດຖະກິດໃນໄລຍະໃໝ່.

### ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

### ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ດຳລັດສະບັບນີ້ ກຳນົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ ໃນການເປີດກວ້າງການພົວພັນ ແລະ ຮ່ວມມືກັບສາກົນ ແລະ

ຕ່າງປະເທດ ເປັນຕົ້ນແມ່ນການເຄື່ອນໄຫວວຽກງານການເຊື່ອມໂຍງເສດຖະກິດກັບສາກົນໃຫ້ປະກົດຜົນເປັນຈິງ.

**ມາດຕາ 2: ອະທິບາຍຄໍາສັບ**

ຄໍາວ່າເຊື່ອມໂຍງເສດຖະກິດກັບສາກົນ ໃນດໍາລັດສະບັບນີ້ໝາຍເຖິງ: ການພົວພັນ ຫຼື ການຮ່ວມມືທາງດ້ານເສດຖະກິດ ໂດຍການເຂົ້າເປັນສະມາຊິກ ແລະ ເຂົ້າຮ່ວມເຄື່ອນໄຫວຢູ່ໃນອົງການຈັດຕັ້ງຕ່າງໆ ທາງດ້ານເສດຖະກິດຂອງສາກົນ, ບໍ່ວ່າຈະແມ່ນໃນລະດັບຮູບແບບສອງຝ່າຍ, ພາກພື້ນ ແລະ ຫຼາຍຝ່າຍ.

**ມາດຕາ 3: ການສ້າງຕັ້ງ**

ສ້າງຕັ້ງຄະນະກໍາມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ໂດຍອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ສະບັບເລກທີ 123/ນຍ, ລົງວັນທີ 19/04/2007.

**ມາດຕາ 4: ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກໍາມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ຕໍ່ໄປນີ້ເອີ້ນຫຍໍ້ວ່າ: "ຄປຊ" ຊຶ່ງຂຽນເປັນພາສາອັງກິດວ່າ: "National Steering Committee for Economic Integration" ຂຽນຫຍໍ້: "NSC" ແມ່ນອົງການຈັດຕັ້ງສະເພາະກິດໜຶ່ງ ຂອງລັດຖະບານ ແຫ່ງ ສ.ປ.ປ. ລາວ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ນາຍົກລັດຖະມົນຕີ ໃນການປະສານງານ, ກໍານົດທິດທາງ ແລະ ວາງແຜນຍຸດທະສາດ ກ່ຽວກັບການເຈລະຈາການຄ້າ ແລະ ການເຊື່ອມໂຍງເສດຖະກິດກັບສາກົນ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ມີຄວາມວ່ອງໄວ-ທ່ວງທັນກັບເວລາ ແລະ ຊີ້ນໍາການຈັດຕັ້ງປະຕິບັດໂຄງການເຊື່ອມໂຍງເຂົ້າກັບສາກົນດ້ານການຄ້າ (Integrated Framework ຂຽນຫຍໍ້: 'IF').

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 5 : ໜ້າທີ່**

ຄະນະກໍາມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ມີໜ້າທີ່ດັ່ງນີ້:

5.1 ສະເໜີລັດຖະບານ ຫຼື ນາຍົກລັດຖະມົນຕີ ພິຈາລະນາແຜນຍຸດທະສາດ, ແຜນການໄລຍະຍາວ, ແຜນການປະຈໍາປີ ກ່ຽວກັບການເຊື່ອມໂຍງເສດຖະກິດກັບສາກົນ ແລະ ຊີ້ນໍາຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ;

5.2 ພົວພັນປະສານງານກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການອື່ນໆທີ່ເປັນສະມາຊິກ ເພື່ອກຳນົດທິດທາງ, ຍຸດທະສາດ ແລະ ວິທີການໃນການເຈລະຈາກັບອົງການຈັດຕັ້ງສາກົນ ຫຼື ຕ່າງປະເທດ ແບບສອງຝ່າຍ, ພາກພື້ນ ແລະ ຫຼາຍຝ່າຍ ໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວທັນເວລາ ບົນພື້ນຖານແນວທາງ, ແຜນນະໂຍບາຍຂອງພັກ-ລັດ ແນໃສ່ຮັບປະກັນໃຫ້ເກີດມີຜົນປະໂຫຍດຕໍ່ປະເທດຊາດໂດຍລວມ;

5.3 ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດມາດຕະການທີ່ເໝາະສົມ ເພື່ອຊີ້ນຳ-ນຳພາ ວຽກງານການເຊື່ອມໂຍງເສດຖະກິດກັບສາກົນ ຂອງ ສປປ ລາວ ໃຫ້ສຳເລັດຜົນຕາມລະດັບຄາດໝາຍ ທີ່ວາງໄວ້;

5.4 ຄົ້ນຄວ້າ ແລະ ນຳສະເໜີລັດຖະບານອະນຸມັດ ກ່ຽວກັບຂັ້ນຕອນ ແລະ ກຳນົດໝາຍເວລາ (Road Map) ເພື່ອໃຫ້ ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ແລະ ອົງການສາກົນທາງດ້ານເສດຖະກິດອື່ນໆຕາມລະບຽບການຂອງອົງການການຄ້າໂລກ ແລະ ອົງການສາກົນທາງດ້ານເສດຖະກິດອື່ນໆວາງອອກ;

5.5 ສະເໜີລັດຖະບານປັບປຸງນະໂຍບາຍ, ກົດໝາຍ ແລະ ລະບຽບການບໍລິຫານດ້ານເສດຖະກິດ ເພື່ອໃຫ້ສອດຄ່ອງກັບສະພາບການຂອງປະເທດໃນໄລຍະໃໝ່ ແລະ ສອດຄ່ອງກັບລະບຽບ, ກົດໝາຍຂອງສາກົນ ໂດຍສະເພາະແມ່ນຂອງອົງການທີ່ ສປປ ລາວ ເຂົ້າເປັນສະມາຊິກ. ຊີ້ນຳ, ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ປະຕິບັດເຂັ້ມງວດບັນດາຂໍ້ຜູກພັນສັນຍາ ແລະ ພັນທະຂອງຕົນຕໍ່ອົງການຈັດຕັ້ງສາກົນ ທີ່ ສປປ ລາວ ເຂົ້າເປັນສະມາຊິກ;

5.6 ຕາງໜ້າລັດຖະບານ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງ ສປປ ລາວ ຢູ່ໃນບັນດາອົງການການຄ້າ ແລະ ອົງການສາກົນດ້ານເສດຖະກິດຕ່າງໆ ທີ່ ສປປ ລາວ ເປັນສະມາຊິກ;

5.7 ເປັນເຈົ້າການ ຫຼື ປະສານສົມທົບກັບອົງການທີ່ກ່ຽວຂ້ອງອື່ນໆ ດຳເນີນການເຈລະຈາແບບສອງຝ່າຍ, ພາກພື້ນ ແລະ ຫຼາຍຝ່າຍ ບົນຫຼັກການຖືເອົາຜົນປະໂຫຍດສູງສຸດຂອງປະເທດຊາດເປັນສິ່ງສຳຄັນ;

5.8 ພົວພັນ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ເພື່ອຍາດແຍ່ງເອົາການສະໜັບສະໜູນ, ທາງດ້ານການເມືອງ ແລະ ການຊ່ວຍເຫຼືອດ້ານເສດຖະກິດໃນການເຊື່ອມໂຍງເຂົ້າກັບສາກົນ ໃຫ້ນັບມື້ນັບກວ້າງຂວາງ;

5.9 ໂຄສະນາເຜີຍແຜ່ວຽກງານການເຊື່ອມໂຍງເສດຖະກິດກັບສາກົນ ຂອງ ສປປ ລາວ ໃຫ້ທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ, ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຢ່າງເໝາະສົມ ແລະ ເປັນປົກກະຕິ; ແນໃສ່ຄວາມເປັນເອກະພາບ ພາຍໃນທາງດ້ານທັດສະນະໃນການເຊື່ອມໂຍງເສດຖະກິດກັບສາກົນ.

5.10 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງການຝຶກອົບຮົມຍົກລະດັບໃຫ້ແກ່ພະນັກງານ-ລັດຖະກອນ ຢູ່ໃນບັນດາອົງການຈັດຕັ້ງຂອງພັກ, ລັດ ແລະ ໃຫ້ຜູ້ບໍລິຫານ

ຂອງວິສາຫະກິດຕ່າງໆ ໃຫ້ເປັນເຈົ້າການໃນການເຊື່ອມໂຍງເສດຖະກິດ ກໍ່ຄືການຍົກສູງຄວາມຮັບຮູ້, ຄວາມເຂົ້າໃຈກ່ຽວກັບບົດບາດ, ຄວາມສຳຄັນ ແລະ ຜົນປະໂຫຍດຂອງລາວເຮົາ ເມື່ອໄດ້ເຂົ້າຮ່ວມເຄື່ອນໄຫວຢູ່ໃນອົງການຈັດຕັ້ງສາກົນຕ່າງໆດ້ານເສດຖະກິດ;

5.11 ອຳນວຍຄວາມສະດວກໃນການປະສານສົມທົບກັນລະຫວ່າງບັນດາກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການເກັບກຳຂໍ້ມູນ, ສະຖິຕິການຄ້າໃຫ້ຄົບຖ້ວນສົມບູນທີ່ຕິດພັນ ເພື່ອສາມາດສະໜອງຂໍ້ມູນໃຫ້ແກ່ວຽກງານເຊື່ອມໂຍງເສດຖະກິດກັບສາກົນໃຫ້ວ່ອງໄວ ແລະ ທັນເວລາ;

5.12 ຊຸກຍູ້ ແລະ ຊີ້ນຳໂຄງການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (IF), ການກຳນົດໜ້າວຽກບູລິມະສິດ, ຄວາມຕ້ອງການການຊ່ວຍເຫຼືອທາງດ້ານການຄ້າ, ການນຳໃຊ້ທຶນຊ່ວຍເຫຼືອ ແລະ ທຶນພາຍໃນຕໍ່ໂຄງການທີ່ ໄດ້ກຳນົດໃນຂອບ IF ແລະ ຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໃຫ້ປະສົບຜົນສຳເລັດຕາມເປົ້າໝາຍທີ່ວາງໄວ້.

5.13 ທົບທວນຄືນພາລະບົດບາດຂອງຄະນະກຳມະການປະສານງານລະດັບຊາດ ເພື່ອປັບປຸງໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ;

5.14 ສະຫຼຸບລາຍງານຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບສະພາບການຮ່ວມມື ທາງດ້ານເສດຖະກິດລະຫວ່າງ ສປປ ລາວ ແລະ ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ກ່ຽວກັບສະພາບການເຊື່ອມໂຍງເສດຖະກິດກັບສາກົນ, ຄວາມຄືບໜ້າຂອງການເຈລະຈາ ແລະ ການປະຕິບັດພັນທະຂອງການເຂົ້າເປັນສະມາຊິກອົງການຕ່າງໆທາງດ້ານເສດຖະກິດສາກົນ ໃນແຕ່ລະໄລຍະ ແລະ ລາຍງານສະພາບການປະຕິບັດໂຄງການ IF;

5.15 ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງລັດຖະບານ ແລະ ນາຍົກລັດຖະມົນຕີ.

## ມາດຕາ 6 : ຂອບເຂດສິດ

ຄປຊ ມີຂອບເຂດສິດດັ່ງນີ້:

6.1 ຊີ້ນຳວຽກງານການເຊື່ອມໂຍງເສດຖະກິດກັບສາກົນກໍ່ຄືການເຈລະຈາກ່ຽວກັບບັນຫາຕ່າງໆໃນຂົງເຂດເສດຖະກິດແບບສອງຝ່າຍ, ພາກພື້ນ ແລະ ຫຼາຍຝ່າຍ ແລະ ຊີ້ນຳການຈັດຕັ້ງປະຕິບັດໂຄງການ IF;

6.2 ພົວພັນ, ຮ່ວມມື, ເຊັນສັນຍາ, ອານຸສັນຍາ ແລະ ບົດບັນທຶກຄວາມເຂົ້າໃຈຕ່າງໆ ແບບສອງຝ່າຍ, ພາກພື້ນ ແລະ ຫຼາຍຝ່າຍ ຕາມການມອບໝາຍຂອງລັດຖະບານ;

6.3 ຮັບເອົາການຊ່ວຍເຫຼືອ ຂອງ ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ທີ່ພົວພັນກັບການຄ້າ (Trade Related Technical Assistance ຂຽນຫຍໍ້: 'TRTA');

6.4 ຮຽກເຊີນຜູ້ຕາງໜ້າຈາກບັນດາກະຊວງ, ອົງການທຽບເທົ່າກະຊວງ, ຜູ້ຕາງໜ້າຄະນະກຳມະການຕ່າງໆ ແລະ ຜູ້ຕາງໜ້າອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງມາປະຊຸມ

ເພື່ອປຶກສາຫາລືເປັນເອກະພາບນຳກັນ ກ່ຽວກັບບັນຫາຕ່າງໆ ທີ່ພົວພັນເຖິງວຽກງານການເຊື່ອມໂຍງເສດຖະກິດກັບ ສາກົນ;

6.5 ເຜີຍແຜ່ໃຫ້ບັນດາກະຊວງ, ອົງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງພາກທຸລະກິດໃຫ້ເຂົ້າໃຈ ແລະ ປະກອບສ່ວນໃນວຽກງານການເຊື່ອມໂຍງເສດຖະກິດກັບສາກົນ;

6.6 ນຳສະເໜີ ຫຼື ລາຍງານລັດຖະບານ ເພື່ອພິຈາລະນາແກ້ໄຂກ່ຽວກັບບັນຫາຫຍຸ້ງຍາກທີ່ຕິດພັນກັບ ພາລະໜ້າທີ່ຂອງຕົນ ເພື່ອເຮັດໃຫ້ວຽກງານການເຊື່ອມໂຍງເສດຖະກິດກັບສາກົນ ສຳເລັດຜົນຕາມຄາດໝາຍ;

6.7 ອະນຸມັດໃຫ້ພາກສ່ວນທີ່ກ່ຽວຂ້ອງ ຫຼື ເປັນເຈົ້າການໃນການຈັດກອງປະຊຸມສຳມະນາວິຊາການເພື່ອຮ່ວມກັນປຶກສາຫາລືແລກປ່ຽນຄວາມຄິດເຫັນຕໍ່ບັນຫາຕ່າງໆທີ່ກ່ຽວຂ້ອງກັບການເຊື່ອມໂຍງເສດຖະກິດກັບສາກົນ ແລະ ຝຶກອົບຮົມວິຊາການໃຫ້ແກ່ພະນັກງານລັດຖະກອນ ຂອງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານການເຊື່ອມໂຍງເສດຖະກິດກັບສາກົນ;

6.8 ພິຈາລະນາແກ້ໄຂ ຫຼື ສະເໜີແນະໃຫ້ກະຊວງ, ອົງການທີ່ກ່ຽວຂ້ອງ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ຊຶ່ງພົວພັນກັບວຽກງານເຊື່ອມໂຍງເສດຖະກິດກັບສາກົນ ໃຫ້ມີຄວາມຖືກຕ້ອງວ່ອງໄວ; ຫຼີກເວັ້ນການໂຍນຄວາມຮັບຜິດຊອບໃຫ້ຜູ້ອື່ນ ຫຼື ປ່ອຍປະລະເລີຍບໍ່ມີຜູ້ຮັບຜິດຊອບແກ້ໄຂ ພາໃຫ້ວຽກງານ ຊັກຊ້າ ແລະ ບໍ່ທັນເວລາ;

6.9 ແຕ່ງຕັ້ງກອງເລຂາຊ່ວຍວຽກຄະນະກຳມະການລະດັບຊາດ ຈາກຂະແໜງການຂອງຕົນ;

6.10 ປະຕິບັດສິດອື່ນໆ ທີ່ລະບຽບກົດໝາຍກຳນົດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 7 : ໂຄງປະກອບບຸກຄະລາກອນ

ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ປະກອບດ້ວຍ: ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ດັ່ງນີ້:

1. ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ເປັນປະທານ ໂດຍຕຳແໜ່ງ;
2. ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ, ທັງເປັນຜູ້ປະຈຳການ ໂດຍຕຳແໜ່ງ;
3. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ ຂອງ ຄປຊ ;
4. ທ່ານຮອງຫົວໜ້າ ຄະນະເລຂາທິການລັດຖະບານ ເປັນກຳມະການ;
5. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ເປັນກຳມະການ;

6. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນກຳມະການ;
7. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ ເປັນກຳມະການ;
8. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
9. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
10. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
11. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນກຳມະການ;
12. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເປັນກຳມະການ;
13. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ເປັນກຳມະການ;
14. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ເປັນກຳມະການ;
15. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;
16. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນປະເທດ ເປັນກຳມະການ;
17. ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
18. ທ່ານຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ເປັນກຳມະການ;
19. ທ່ານຮອງຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເປັນກຳມະການ
20. ທ່ານຮອງຫົວໜ້າ ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ເປັນກຳມະການ;
21. ທ່ານຮອງປະທານ ອົງການທ່ອງທ່ຽວແຫ່ງຊາດ ເປັນກຳມະການ;
22. ທ່ານຮອງຫົວໜ້າ ອົງການໄປສະນີ ແລະ ໂທລະຄົມມະນາຄົມ ແຫ່ງຊາດ ເປັນກຳມະການ
23. ທ່ານຮອງຫົວໜ້າ ກຳມາທິການກົດໝາຍ, ສະພາແຫ່ງຊາດ ເປັນກຳມະການ;
24. ທ່ານຮອງຫົວໜ້າ ກຳມາທິການເສດຖະກິດ ແລະ ການເງິນ ສະພາແຫ່ງຊາດ ເປັນກຳມະການ;
25. ທ່ານ ຮອງປະທານ ສານປະຊາຊົນສູງສຸດ ເປັນກຳມະການ
26. ທ່ານ ຮອງອົງການ ໄອຍະການ ປະຊາຊົນສູງສຸດ ເປັນກຳມະການ
27. ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນກຳມະການ.

ມອບໃຫ້ທ່ານປະທານ ຄປຊ ແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນຄະນະ; ຕົກລົງແຕ່ງຕັ້ງສະມາຊິກກອງເລຂາ ຄປຊ ແລະ ກຳນົດພາລະບົດບາດ, ໜ້າທີ່ຂອງກອງເລຂາຊ່ວຍວຽກຢ່າງລະອຽດຈະແຈ້ງຕື່ມ.

**ມາດຕາ 8 : ໂຄງປະກອບກົງຈັກຊ່ວຍວຽກ**

ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ເປັນຄະນະເຄື່ອນໄຫວທີ່ບໍ່ປະຈຳການ ແຕ່ມີຫ້ອງການຊ່ວຍວຽກເປັນປະຈຳໂດຍມອບໃຫ້ກົມນະໂຍບາຍການຄ້າຕ່າງປະເທດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດບົດບາດ, ໜ້າທີ່ ຂອງ ຫ້ອງການດັ່ງກ່າວ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 9: ຫຼັກການ ແລະ ວິທີການເຮັດວຽກ**

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງ ຄປຊ ຕ້ອງປະຕິບັດຫຼັກການເຮັດວຽກຄື: ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເສີມຂະຫຍາຍ, ຫົວຄິດປະດິດສ້າງ ປຶກສາຫາລື ຕົກລົງວຽກງານເປັນໝູ່ຄະນະ, ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຂະແໜງການ ແລະ ປະຕິບັດຕາມໜ້າທີ່ ແລະ ຂອບເຂດສິດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 10: ລະບອບການປະຊຸມ ແລະ ລາຍງານ**

10.1 ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ປະຊຸມສາມັນຢ່າງໜ້ອຍ 02 ຄັ້ງຕໍ່ປີ. ໃນກໍລະນີຈຳເປັນກໍ່ສາມາດຮຽກປະຊຸມວິສາມັນໄດ້ເພື່ອພິຈາລະນາ ແລະ ແກ້ໄຂບັນຫາຕ່າງໆ ທີ່ສຳຄັນຂອງ ຄປຊ ເຊັ່ນ: ກຳນົດທິດທາງ, ວິທີການເຈລະຈາການຄ້າ ແລະ ການກຳນົດຍຸດທະສາດ ໃນແຕ່ລະໄລຍະ ແລະ ລາຍງານສະພາບການເຊື່ອມໂຍງເສດຖະກິດກັບສາກົນ ໃຫ້ລັດຖະບານຮັບຊາບຢ່າງເປັນປົກກະຕິ ແລະ ລາຍງານຜົນຂອງກອງປະຊຸມ ແຕ່ລະຄັ້ງໃຫ້ບັນດາກະຊວງ, ອົງການທີ່ເປັນສະມາຊິກຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບ ແລະ ມີຄວາມວ່ອງໄວ ທ່ວງທັນກັບເວລາ;

10.2 ກອງເລຂາ ຄປຊ ປະຊຸມພົບປະເຮັດວຽກເປັນປົກກະຕິ ຢ່າງໜ້ອຍ 01 ຄັ້ງຕໍ່ໄຕມາດ. ໃນກໍລະນີມີວຽກຈຳເປັນ ແລະ ຮີບດ່ວນກໍ່ສາມາດຮຽກປະຊຸມວິສາມັນໄດ້ຕາມຄວາມເໝາະສົມ ແລະ ລາຍງານຜົນຂອງກອງປະຊຸມ ໃຫ້ແກ່ຜູ້ປະຈຳການ ຄປຊ ຮັບຊາບ ຫຼື ຂໍທິດຊີ້ນຳ (ຖ້າມີ) ເພື່ອປະຕິບັດວຽກງານໃຫ້ທັນກັບເວລາ ແລະ ສຳເລັດຜົນຕາມຄາດໝາຍ;

10.3 ມີຫ້ອງການຊ່ວຍວຽກເປັນປະຈຳໂດຍມອບໃຫ້ກົມນະໂຍບາຍການຄ້າຕ່າງປະເທດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເປັນຈຸດປະສານງານຂອງກອງເລຂາ; ຊ່ວຍວຽກກອງເລຂາໃນການສະຫຼຸບ-ສັງລວມສະພາບການ, ເຮັດບົດລາຍງານ ແລະ ຊ່ວຍວຽກອື່ນໆຄຽງຄູ່ກັບ ພາລະບົດບາດຂອງຕົນ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 11: ກາປະທັບ ແລະ ງົບປະມານ**

ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ມີກາປະທັບ ແລະ ງົບປະມານສະເພາະ ເພື່ອເຄື່ອນໄຫວວຽກງານລັດຖະການ. ສຳລັບງົບປະມານແມ່ນໃຫ້ຂຶ້ນແຜນງົບປະມານປະຈຳປີ ນຳກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 12: ການຈັດຕັ້ງປະຕິບັດ**

ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13: ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 123/ນຍ, ລົງວັນທີ 19 ເມສາ 2007.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ